# ຮູ້ສຶກເປັນບຸນຄຸນ




“ຈິນດາ ຂ້ອຍຫິວເຂົ້າແລ້ວ ເຮົາໄປຊອກກິນອາຫານນຳກັນເທາະ”
“ຂ້ອຍກໍຫິວຄືກັນ.”
COMPANY
PURE WATER
ໃນຕອນທີ່ ຈິນດາ ແລະ ວຽງ ກຳລັງກິນອາຫານຢູ່ນັ້ນ ທັງສອງ ໄດ້ເຫັນອຸບັດຕິເຫດເກີດຂຶ້ນ ແລະເຮັດໃຫ້ເຂົາທັງສອງຕື່ນຂຶ້ນຢ່າງແຮງ.
M.CH.SOKHA


"ມີເທື່ອໜຶ່ງ ຂ້ອຍເກືອບເກີດອຸບັດຕິເຫດ."
"ແມ່ນບໍ? ເລົ່າເລື່ອງ ໃຫ້ຂ້ອຍຟັງແດ່."
ມີຜູ້ຊາຍຜູ້ໜຶ່ງຊື່ວ່າ ວິທະກອນ. ລາວກຳລັງ ເຮັດວຽກບ້ານ ແຕ່ລາວເຮັດບໍ່ໄດ້ ເພາະມັນຍາກຫຼາຍສຳລັບລາວ.
ແລະ ລາວກໍໄດ້ນຶກເຖິງຜູ້ໜຶ່ງ ເຊິ່ງຈະສາມາດຊ່ວຍລາວໄດ້.
"ໂອ້! ອ້າຍຂ້ອຍຊ່ວຍໄດ້."
"ອ້າຍ! ຊ່ວຍອະທິບາຍວຽກບ້ານ ໃຫ້ຂ້ອຍໄດ້ບໍ? ຂ້ອຍບໍ່ເຂົ້າໃຈ."
"ກະໄດ້! ບໍ່ເປັນຫຍັງ!"
"ໂອ້! ຂ້ອຍຢາກ ນອນ! ຂ້ອຍຂໍນອນ ກ່ອນເດີ."
"ເອີ! ນອນເລີຍ."
M.CH.SOKHA


ທຸກໆມື້ ວິທະກອນ ຈະຊ່ວຍແມ່ຂາຍເຝີຢູ່ຕະຫຼາດ.
"ແມ່, ລູກເອົາຂີ້ເຫຍື້ອໄປຖິ້ມກ່ອນເດີ້."
"ໂອ້ຍ!"
"ລະວັງ!!"
ວິທະກອນ ຫຼຽວເຫັນ ຈິນດາ ແລ້ວກໍດຶງລາວກັບມາ ເພື່ອບໍ່ໃຫ້ລົດຕຳ.
"ອ້ອຍ!!!"
M. CH. SOKHA


“ໂທ່! ຈັ່ງແມ່ນຂັບລົດໄວແທ້!”
ຈິນດາ ຕົກໃຈຫຼາຍ ແລະຟ້າວຍ່າງເມືອ
ໂດຍບໍ່ໄດ້ເວົ້າຫຍັງກັບ ວິທະກອນ ເລີຍ.
ແມ່ຂອງ ຈິນດາ ກຳລັງແຕ່ງອາຫານແລງກິນ.
“ໂອ້! ຂອບໃຈແມ່
ອາຫານແຊບຫຼາຍ.”
“ແທ້ບໍ?”
ດີຫຼາຍທີ່ເຫັນຄອບຄົວຮູ້
ບຸນຄຸນເຊິ່ງກັນແລະກັນ
ຊ່ວຍເຫຼືອເບິ່ງແຍງກັນ.
M. CH. SOKHA


ຄຳເວົ້າຂອງໝູ່ເຮັດໃຫ້ຂ້ອຍຄິດເຖິງເຫດການໃນມື້ນັ້ນ.
"ໂອ້! ລືມຂອບໃຈ ວິທະກອນ ທີ່ໄດ້ຊ່ວຍຂ້ອຍພົ້ນຈາກອຸບັດຕິເຫດ."
ມື້ຕໍ່ມາ...
"ວິທະກອນ, ເອື້ອຍລືມຂອບໃຈນ້ອງ ທີ່ຊ່ວຍເອື້ອຍ."
"ບໍ່ເປັນຫຍັງ ນ້ອງເຕັມໃຈຊ່ວຍ."
"ອຸ໋ຍ! ຂ້ອຍລືມຂອບໃຈອ້າຍ ທີ່ລາວເຮັດວຽກບ້ານ ຊ່ວຍຂ້ອຍຊ້ຳ."
M. CH. SOKHA


ວິທະກອນ ແລ່ນກັບໄປເຮືອນ.
ຈະໄປ ຂອບໃຈ ອ້າຍ.
"ອ້າຍເອີ້ຍ!!"
"ຂອບໃຈເດີ! ທີ່ຊ່ວຍບອກວຽກບ້ານນ້ອງ."
"ບໍ່ເປັນຫຍັງ."
ທັງສອງໄດ້ກອດກັນ.
M-CH-SOKHA




ຂອບໃຈ ຜູ້ສ້າງຜູ້ແຕ່ງ ສຳລັບທຸກສິ່ງ
ທີ່ ພຣະອົງ ໃຫ້ພວກເຮົາ.





**ຄຳຖາມສົນທະນາ**

1. ເຈົ້າເຄີຍມີຄົນມາຂອບໃຈເຈົ້າບໍ?
   ເຈົ້າຮູ້ສຶກແນວໃດ?

2. ມີຫຍັງແດ່ທີ່ເຈົ້າຄວນຈະຂອບໃຈ ພຣະເຈົ້າ?
   ຈົ່ງຄິດຫາຕົວຢ່າງ, ຢ່າງໜ້ອຍສາມຕົວຢ່າງ.



**ກິດຈະກຳ**

ມີຜູ້ໃດຜູ້ໜຶ່ງທີ່ເຮົາຄວນຂອບໃຈບໍ?
ຢ່າຊ້າຮີບໄປຂອບໃຈເພິ່ນສາ.



ເມື່ອ ພຣະເຢຊູ ພວມຈະເຂົ້າໄປໃນບ້ານແຫ່ງໜຶ່ງ ກໍໄດ້ມີຊາຍສິບຄົນອອກມາພົບ ພຣະອົງ.

ຊາຍເຫຼົ່ານີ້ເປັນພະຍາດຜິວໜັງຂັ້ນອັນຕະລາຍ. ພວກເຂົາຢືນຢູ່ຢ່າງຫ່າງໆ ແລະຮ້ອງຂຶ້ນວ່າ, "ເຢຊູ! ອາຈານເຈົ້າຂ້າ! ໂຜດເມດຕາຜູ້ຂ້າແດ່ທ້ອນ!"

ເມື່ອ ພຣະເຢຊູ ເຫັນຊາຍເຫຼົ່ານັ້ນ ກໍກ່າວແກ່ເຂົາວ່າ, "ຈົ່ງໄປຫາປະໂລຫິດໃຫ້ກວດເບິ່ງເຈົ້າເດີ"

ຂະນະທີ່ພວກເຂົາໄປຕາມທາງນັ້ນ ຕ່າງຄົນກໍດີສະອາດ. ເມື່ອຄົນໜຶ່ງໃນພວກເຂົາ ເຫັນວ່າຕົນເອງສະອາດດີແລ້ວ ລາວຈຶ່ງກັບມາກ່າວສັນລະເສີນ ພຣະເຈົ້າ ດ້ວຍສຽງດັງ. ລາວຂາບລົງ ທີ່ຕີນຂອງ ພຣະເຢຊູ ແລະຂອບຄຸນ ພຣະອົງ. ຊາຍຄົນນີ້ເປັນໄທຊາມາເລຍ.

ພຣະເຢຊູ ກ່າວວ່າ, "ມີສິບຄົນທີ່ດີສະອາດ ບໍ່ແມ່ນບໍ? ພວກເກົ້າຄົນນັ້ນເດຢູ່ໃສ? ເປັນຫຍັງຈຶ່ງມີແຕ່ຊາວຕ່າງດ້າວຄົນນີ້ຜູ້ດຽວທໍ່ນັ້ນທີ່ກັບມາຂອບຄຸນ ພຣະເຈົ້າ?"

ແລ້ວ ພຣະເຢຊູເຈົ້າ ກໍກ່າວແກ່ລາວວ່າ, "ຈົ່ງລຸກຂຶ້ນ ແລະໄປສາ. ຄວາມເຊື່ອຂອງເຈົ້າໄດ້ເຮັດໃຫ້ເຈົ້າຫາຍດີແລ້ວ."

ລູກາ 17:11-19



© Alongsiders International
www.alongsiders.org
Email: info@alongsiders.org